ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ເຈົ້າໜ້າທີ່ຕຳຫຼວດ ພົບເຫັນການໃຫ້ບໍລິການແລກປ່ຽນເງິນຕາຜິດກົດໝາຍ ແລະ ໃສ່ມາດຕະການຕໍ່ຜູ້ລະເມີດທັນທີ !







ພາຍຫຼັງ ທຫລ ອອກ ແຈ້ງການຢຸດຕິການອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາຂອງຮ້ານແລກປ່ຽນເງິນຕາຕົວແທນຂອງທະນາຄານທຸລະກິດ ຈຳນວນ 113 ຮ້ານ, ໃນລະຫວ່າງເດືອນ ເມສາ 2023 ທະນາຄານແຫ່ງ ສປປ ລາວ ໄດ້ປະສານສົມທົບ ເຈົ້າໜ້າທີ່ຕຳຫຼວດເສດຖະກິດ ລົງຕິດຕາມກວດກາ ການເຄື່ອນໄຫວແລກປ່ຽນເງິນຕາຜິດກົດໝາຍ, ຊຶ່ງສາມາດ ລົງກວດກາຄືນຈຳນວນ 67 ເປົ້າໝາຍແບບກັບທີ່ ຢູ່ນະຄອນຫຼວງວຽງຈັນ ຈຳນວນ 30 ຮ້ານ ແລະ ຢູ່ທ້ອງຖິ່ນ ຈຳນວນ 37 ເປົ້າໝາຍ.

ຜ່ານການລົງກວດກາ ສ່ວນໃຫຍ່ແມ່ນໄດ້ຢຸດຕິການເຄື່ອນໄຫວແລກປ່ຽນເງິນຕາ, ແຕ່ຍັງມີຈຳນວນໜຶ່ງທີ່ຍັງເຄື່ອນໄຫວແລກປ່ຽນເງິນຕາແບບຜິດກົດໝາຍ ເປັນຕົ້ນ ມີການເປີດໃຫ້ບໍລິການແລກປ່ຽນເງິນຕາແບບເປີດແປນ ແລະ ບໍ່ມີໜ້າຮ້ານ, ມີການປະກາດໂຄສະນາອັດຕາແລກປ່ຽນ ທັງເປັນບ່ອນຕິດຕໍ່ຊື້-ຂາຍເງິນຕາ ຢ່າງເປີດແປນຜ່ານສື່ຕ່າງໆ ໂດຍບໍ່ຢ້ານກົວຕໍ່ລະບຽບກົດໝາຍ ເປັນຕົ້ນ Facebook, Whatsapp ແລະ ອື່ນໆ. ຕໍ່ປະກົດການດັ່ງກ່າວທາງເຈົ້າໜ້າທີ່ຕຳຫຼວດ ແລະ ພະນັກງານຈາກທະນາຄານແຫ່ງ ສປປ ລາວ ໄດ້ສຶກສາອົບຮົມພວກກ່ຽວໃຫ້ຮັບຮູ້, ເຂົ້າໃຈຕໍ່ກັບລະບຽບກົດໝາຍ ແລະ ເຮັດບົດບັນທຶກກ່າວເຕືອນໃຫ້ຜູ້ລະເມີດຢຸດດຳເນີນທຸລະກິດແລກປ່ຽນເງິນຕາໂດຍທັນທີ, ກໍລະນີ ຫາກພົບເຫັນ ຍັງສືບຕໍ່ເຄື່ອນໄຫວທຸລະກິດແລກປ່ຽນເງິນຕາ ຈະຖືກດຳເນີນມາດຕະການຕ່າງໆທີ່ໜັກກວ່າເກົ່າຕາມທີ່ກຳນົດໄວ້ໃນລະບຽບກົດໝາຍກ່ຽວຂ້ອງ.



ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງປ້ອງກັນຄວາມສະຫງົບ
ກົມໃຫຍ່ຕຳຫຼວດ
ກົມຕຳຫຼວດເສດຖະກິດ

ບົດບັນທຶກກ່າວເຕືອນ

- ອີງຕາມ ກົດໝາຍ ວ່າດ້ວຍກຳລັງປ້ອງກັນຄວາມສະຫງົບປະຊາຊົນ ສະບັບປັບປຸງ ປີ 2017.
- ອີງຕາມ ກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2017 ແລະ ປະມວນກົດໝາຍອາຍາ ສະບັບປີ 2017.
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22/12/2014.

ທີ່: ...................................................................... ໃນ
ເວລາ...14......ໂມງ....00.....ນາທີ ຂອງວັນທີ...27/04/2023..............................

ຄະນະຮັບຜິດຊອບກວດກາ ແລະ ຕິດຕາມຮ້ານແລກປ່ຽນເງິນ, ຮ້ານຂາຍ ແລະ ຮ້ານຂາຍວັດຖຸມີຄ່າ ເລກທີ 23/ສພກ.36 ປະກອບມີ:

1. ທ່ານ. ............ ໜ້າທີ່ຮັບຜິດຊອບ................ພາກສ່ວນ...............
2. ທ່ານ. ............ ໜ້າທີ່ຮັບຜິດຊອບ................ພາກສ່ວນ...............
3. ທ່ານ. ............ ໜ້າທີ່ຮັບຜິດຊອບ................ພາກສ່ວນ...............
4. ທ່ານ. ............ ໜ້າທີ່ຮັບຜິດຊອບ................ພາກສ່ວນ...............
5. ທ່ານ. ............ ໜ້າທີ່ຮັບຜິດຊອບ................ພາກສ່ວນ...............
6. ທ່ານ................................ ໜ້າທີ່ຮັບຜິດຊອບ.......................ພາກສ່ວນ.........................

ໄດ້ເຮັດບົດບັນທຶກກ່າວເຕືອນ ທ້າວ/ນາງ................................, ອາຍຸ..24.. ປີ,
ອາຊີບ............................., ປະຈຸບັນຢູ່ບ້ານ..........................ໜ່ວຍ..........
ເມືອງ.............................. ນະຄອນຫຼວງວຽງຈັນ, ວັນ, ເດືອນ, ປີ ເກີດ........................, ເຊື້ອຊາດ
ແລະ ສັນຊາດ..........., ຖືບັດປະຈຳຕົວເລກທີ................, ຮ້ານແລກປ່ຽນຊື່ຮ້ານ:
...................ຕາມໃບທະບຽນວິສາຫະກິດ, ສະບັບເລກທີ......................ລົງວັນທີ
........................ອອກໂດຍ............................, ບັນຊີຮ້ານອອກ
.............................ຕາມເລກບັນຊີ...................................., ທີ່ເປີດຢູ່ທະນາຄານ
.........................................................., ເປັນຕົວແທນຂອງທະນາຄານທຸລະກິດ
....................., ລະຫັດ:......................, ພະນັກງານຂອງຮ້ານປະກອບມີ:
1:.........................................................................................................
...........................................................................................................

1



ໃນປັດຈຸບັນ ອີງຕາມກົດໝາຍຂອງ ສປປ ລາວ ແມ່ນກຳນົດໃຫ້ທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ ເທົ່ານັ້ນ ທີ່ສາມາດໃຫ້ບໍລິການແລກປ່ຽນເງິນຕາ ຊຶ່ງຕ້ອງປະຕິບັດອັດຕາແລກປ່ຽນຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ. ການໃຫ້ບໍລິການແລກປ່ຽນເງິນຕາໂດຍບໍ່ໄດ້ຮັບອະນຸຍາດ ແລະ ໃຊ້ບໍລິການແລກປ່ຽນເງິນຕາກັບບຸກຄົນອື່ນທີ່ບໍ່ແມ່ນທະນາຄານ ເປັນການລະເມີດຂໍ້ຫ້າມ ມາດຕາ 43 ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 7 ກໍລະກົດ 2022, ຊຶ່ງຈະຖືກດຳເນີນມາດຕະການສຶກສາອົບຮົມ ແລະ  ມາດຕະການປັບໃໝ ຕາມມາດຕາ 54 ແລະ ມາດຕາ 55 ຂອງກົດໝາຍສະບັບດັ່ງກ່າວ ຄື: ປັບໃໝ 10 ສ່ວນຮ້ອຍ ຂອງມູນຄ່າທີ່ລະເມີດ. ຍິ່ງໄປກວ່ານັ້ນ ບຸກຄົນ ຫຼື ນິຕິບຸກຄົນ ທີ່ປັ່ນປ່ວນອັດຕາແລກປ່ຽນ ດ້ວຍການສ້າງຂ່າວປອມ, ບິດເບືອນ ຂໍ້ມູນຂ່າວສານ ກ່ຽວກັບບັນດາປັດໄຈທີ່ຈະກະທົບຕໍ່ອັດຕາແລກປ່ຽນ, ກຳນົດອັດຕາແລກປ່ຽນ, ຊື້-ຂາຍ ເງິນຕາໂດຍບໍ່ສອດຄ່ອງກັບລະບຽບການຂອງທະນາຄານແຫ່ງ ສປປ ລາວ, ບໍ່ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ສ້າງຄວາມເສຍຫາຍແກ່ລະບົບເສດຖະກິດ, ການເງິນ ແລະ ເງິນຕາ ຂອງ ສປປ ລາວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ປັບໃໝ ແຕ່ ຫ້າສິບລ້ານກີບ ຫາ ໜຶ່ງຮ້ອຍລ້ານກີບ.

ການໃຫ້ ຫຼື ໃຊ້ ບໍລິການແລກປ່ຽນເງິນຕາ ທີ່ຜິດກົດໝາຍ ໄດ້ກໍ່ໃຫ້ເກີດປະກົດການຫຍໍ້ທໍ້ໃນສັງຄົມ ເປັນຕົ້ນ ການກຳນົດອັດຕາແລກປ່ຽນທີ່ບໍ່ສອດຄ່ອງກັບສະພາບຄວາມເປັນຈິງຂອງເສດຖະກິດ,    ເປັນການປັ່ນປ່ວນອັດຕາແລກປ່ຽນອັນເຮັດໃຫ້ເກີດຜົນເສຍຫາຍທາງດ້ານເສດຖະກິດ, ເກີດມີການສໍ້ໂກງ, ການຕົວະຍົວະຫຼອກລວງໃນສັງຄົມ ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ.

ເພື່ອບໍ່ເປັນການສະໜັບສະໜູນການເຄື່ອນໄຫວທຸລະກິດຜິດກົດໝາຍ,  ເພື່ອຄວາມປອດໄພບໍ່ໃຫ້ຕົກເປັນເຫຍື່ອຂອງກຸ່ມຄົນບໍ່ດີຕົວະຕົ້ມ ຈຶ່ງຮຽກຮ້ອງເຖິງບັນດາພໍ່ແມ່ປະຊາຊົນ ທົ່ວສັງຄົມ ກໍລະນີຫາກມີຄວາມຕ້ອງການແລກປ່ຽນເງິນຕາ ທ່ານຈະຕ້ອງເຂົ້າໃຊ້ບໍລິການແລກປ່ຽນເງິນຕາກັບທະນາຄານທຸລະກິດເທົ່ານັ້ນ.    ຫາກທ່ານພົບເຫັນຂໍ້ມູນການໃຫ້ບໍລິການແລກປ່ຽນເງິນຕາທີ່ບໍ່ແມ່ນການບໍລິການຂອງທະນາຄານ ທ່ານສາມາດແຈ້ງ ຫຼື ສະໜອງຂໍ້ມູນດັ່ງກ່າວໃຫ້ກັບ ເຈົ້າໜ້າທີ່ຕຳຫຼວດ (ເບີໂທ: 020 312401) ຫຼື ທະນາຄານແຫ່ງ ສປປ ລາວ (ເບີໂທ 021 264 590) ເພື່ອເປັນຂໍ້ມູນດຳເນີນການຕິດຕາມກວດກາ ແລະ ດຳເນີນມາດຕະການຕໍ່ພາກສ່ວນດັ່ງກ່າວຕາມກົດໝາຍ. ການຮ່ວມມືຂອງພໍ່ແມ່ປະຊາຊົນ ແມ່ນເປັນການປະກອບສ່ວນ ສ້າງສັງຄົມໃຫ້ມີຄວາມເປັນລະບຽບຮຽບຮ້ອຍ ມີຄວາມສະຫງົບປອດໄພ ແລະ ການຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນຄົງ ແລະ ເຂັ້ມແຂງຍິ່ງຂຶ້ນ.

**# ຂ່າວ-ພາບ: ກົມນະໂຍບາຍເງິນຕາ**